ດ່ວນທີ່ສຸດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ
ແລະ ແກ້ໄຂການລະບາດຂອງພະຍາດ COVID-19

ເລກທີ 085/ສພກ.ບກ
ບໍ່ແກ້ວ, ລົງວັນທີ 26.04.2021

# ແຈ້ງການ

ເຖິງ: ອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ, ສອງກອງບັນຊາການປກຊ-ປກສ, ບັນດາເຈົ້າເມືອງ 5 ເມືອງ, ເຂດເສດຖະກິດພິເສດສາມຫຼ່ຽມຄຳ, ນັກທຸລະກິດ, ຜູ້ປະກອບການ ແລະ ປະຊາຊົນບັນດາ ເຜົ່າທົ່ວແຂວງບໍ່ແກ້ວ ທີ່ນັບຖື.

ເລື່ອງ: ປິດການເຂົ້າ-ອອກ ພາຍໃນຂອບເຂດ ເມືອງຫ້ວຍຊາຍ ເປັນການຊົ່ວຄາວ

- ອີງຕາມ ຄຳສັ່ງ ນາຍົກລັດຖະມົນຕີ ເລກທີ 15/ນຍ, ລົງວັນທີ 21 ເມສາ 2021
- ອີງຕາມ ຄຳສັ່ງ ຂອງເຈົ້າແຂວງ ແຂວງບໍ່ແກ້ວ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຕວບຄຸມ ແລະ ກະກຽມຄວາມພ້ອມຮອບດ້ານ ເພື່ຕ້ານພະຍາດ COVID-19 ເລກທີ 333/ ຈຂ.ບກ ລົງວັນທີ 23 ເມສ 2021

ເນື່ອງຈາກ ສະພາບການແຜ່ລະບາດຂອງເຊື້ອພະຍາດ COVID-19 ຢູ່ພາຍໃນ ສປປ ລາວ, ໂດຍສະເພາະຢູ່ແຂວງບໍ່ແກ້ວພວກເຮົາ ເຊິ່ງມີລາຍງານຈຳນວນຜູ້ຕິດເຊື້ອເພີ່ມຂຶ້ນໃນແຕ່ລະວັນ, ເພື່ອເປັນການປ້ອງກັນ ແລະ ຄວບຄຸມການຕິດເຊື້ອແຜ່ເຊື້ອ ບໍ່ໃຫ້ແຜ່ຂະຫຍາຍເປັນວົງກວ້າງ ຄະນະສະເພາະກິດແຂວງບໍ່ແກ້ວ ຂໍຖືເປັນກຽດ ແຈ້ງມາຍັງອົງການຈັດຕັ້ງພັກ-ລັດ, ສະພາປະຊາຊົນແຂວງ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ, ສອງກອງບັນຊາການປກຊ-ປກສ, ບັນດາເຈົ້າເມືອງ 5 ເມືອງ, ເຂດເສດຖະກິດພິເສດສາມຫຼ່ຽມຄຳ, ນັກທຸລະກິດ, ຜູ້ປະກອບການ ແລະ ປະຊາຊົນບັນດາເຜົ່າ ທົ່ວແຂວງບໍ່ແກ້ວ ເພື່ອຊາບ ດັ່ງນີ້:

1. ເຫັນດີໃຫ້ປິດການເຂົ້າ-ອອກ ພາຍໃນຂອບເຂດເມືອງຫ້ວຍຊາຍ ນັບແຕ່ ວັນທີ 26 ເມສາ 2021 ເປັນຕົ້ນໄປ ແລະ ປິດການສັນຈອນໄປ-ມາ ລະຫວ່າງບ້ານ ຢູ່ພາຍໃນເມືອງຫ້ວຍຊາຍ ແຕ່ 18:30 ໂມງ (ຕອນແລງ) ຮອດເວລາ 6: 00 ໂມງ (ຕອນເຊົ້າ) ຍົກເວັ້ນເຈົ້າໜ້າທີ່, ພະນັກງານທີ່ປະຈຳການ ກວດກາ ລາດຕະເວນ ແລະ ຄົນເຈັບ ທີ່ຕ້ອງໄດ້ຮັບການປິ່ນປົວໂດຍດ່ວນ.
2. ເຫັນດີໃຫ້ປິດຮ້ານຕັດຜົມ, ຮ້ານເສີມຄວາມງາມ ແລະ ການບໍລິການ 3 ຕະຫຼາດ ທີ່ຢູ່ພາຍໃນເທດສະບານເມືອງຫ້ວຍຊາຍຄື: (ຕະຫຼາດສົດມ່ວງແກ້ວ ແລະ ວັງວິວ, ຕະຫຼາດສີດອນມີ, ຕະຫຼາດສາຍມະນີ ບ້ານຂອນແກ້ວ).
3. ເຫັນດີໃຫ້ພະນັກງານລັດຖະກອນ ໂຈະການມາປະຈຳການ ກັກຕົວຢູ່ເຮືອນ, ໂດຍມອບໃຫ້ແຕ່ລະພາກສ່ວນເປັນເຈົ້າການຈັດຕັ້ງແບ່ງຄວາມຮັບຜິດຊອບ, ຜັດປ່ຽນກັນປະຈຳການກັນລະອຽດ ເພື່ອເປັນການຫຼຸດຜ່ອນຄວາມສ່ຽງ ແລະ ແກ້ໄຂວຽກງານທີ່ຈຳເປັນ ຮີບດ່ວນ ພ້ອມນັ້ນ ກໍໃຫ້ນຳໃຊ້ເຄື່ອງມືເອເລັກໂຕນິກໃນການສື່ສານ ຕິດຕໍ່ພົວພັນວຽກງານ.
4. ສຳລັບການຂົນສົ່ງສິນຄ້າຜ່ານແດນ ທີ່ມີຄວາມຈຳເປັນເຊັ່ນ: ການຂົນສົ່ງນຳເຂົ້ານ້ຳມັນເຊື້ອໄຟ, ແກ໊ດ, ປຸ໋ຍເຄົ້າ, ສິນຄ້າອຸປະໂພກ-ບໍລິໂພກ ຈາກຕ່າງປະເທດແມ່ນໃຫ້ນຳເຂົ້າດ່ານສາກົນຂົວມິດຕະພາບ 4 ຈຸດດຽວ ໂດຍຜ່ານການກວດກາຕາມລະບຽບການຂອງເຈົ້າໜ້າທີ່ດ່ານ, ປະຕິບັດມາດຕະການປ້ອງກັນ, ຄວບຄຸມການຕິດເຊື້ອ ແຜ່ເຊື້ອ ຢ່າງ



Scanned with CamScanner

ເຂັ້ມງວດ ເປັນຕົ້ນພະນັກງານຂັບລົດຕ້ອງສວມໃສ່ຊຸດປ້ອງກັນ; ໃສ່ຜ້າປິດປາກ-ດັງ; ພະຫະນະຂົນສິ່ງໄດ້ຮັບການສີດພົ່ນຢາຂ້າເຊື້ອ; ກວດວັດແທກອຸນຫະພູມ ແລະ ມີລົດເປີດ-ປິດຂະບວນລົດຕະຫຼອດການເດີນທາງ ຕາມບົດບັນທຶກທີ່ໄດ້ເຊັນຮ່ວມກັນ.

- ສ່ວນການຂົນສົ່ງສິນຄ້າຢູ່ພາຍໃນ ຈະຕ້ອງປະຕິບັດມາດຕະການຢ່າງເຂັ້ມງວດ ໂດຍໄດ້ຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງ, ຄະນະສະເພາະກິດຕາມລະບຽບການ ໂດຍມີການປ່ຽນພະນັກງານຂັບລົດຢູ່ຈຸດກວດການເຂົ້າເມືອງ, ມີໃບຢັ້ງຢືນການກວດເຊື້ອ, ກໍລະນີພະນັກງານຂັບລົດຫາກເປັນຄົນແຂວງບໍ່ແກ້ວເມື່ອເຂົ້າມາແລ້ວ ຈະຕ້ອງໄດ້ຮັບການກັກກັນຕົວ 14 ວັນ.

5. ມອບໃຫ້ສອງກຳລັງ ປກຊ-ປກສ ແຂວງ ແລະ ເມືອງ ເປັນເຈົ້າການໃນການຕິດຕາມ, ກວດກາ, ລາດຕະເວນຕາມຊາຍແດນ, ຕະຫຼອດການເຂົ້າ-ອອກ ເມືອງຫ້ວຍຊາຍ, ຢູ່ພາຍໃນບ້ານ ແລະ ສະຖານທີ່ຕ່າງໆ ທີ່ໄດ້ແຈ້ງການປິດ ຢ່າງເຂັ້ມງວດ, ພ້ອມທັງປະຕິບັດມາດຕະການຕໍ່ຜູ້ເມີດ ຕາມລະບຽບກົດໝາຍ.

6. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ສົມທົບຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເປັນເຈົ້າການຕິດຕາມ, ກວດກາ ບັນດາຕະຫຼາດທີ່ມີແຈ້ງການປິດ, ກວດກາການສວຍໂອກາດຂຶ້ນລາຄາສິນຄ້າອຸປະໂພກ-ບໍລິໂພກ ແລະ ແນະນຳ ການບໍລິການ, ປະຕິບັດມາດຕະການ ຂອງບັນດາຮ້ານຄ້າຂາຍຍ່ອຍໃນຂອບເຂດຮັບຜິດຊອບຂອງຕົນ

7. ມອບພະແນກກະສິກຳ ແລະ ປ່າໄມ້ ແຂວງ ສົມທົບຫ້ອງການກະສິກຳ ແລະ ປ່າໄມ້ເມືອງໃນການຕິດຕາມ, ກວດກາ, ຢັ້ງຢືນ ກ່ຽວກັບການນຳສົ່ງສິນຄ້າກະສິກຳ ຂາເຂົ້າ-ຂາອອກຢູ່ພາຍໃນແຂວງບໍ່ແກ້ວ ຂອງບັນດາບໍລິສັດ ແລະ ວິສາຫາກິດຕ່າງໆ.

8. ມອບໃຫ້ທຸກອົງການຈັດຕັ້ງພັກ-ລັດທຸກຂັ້ນ, ອົງການຈັດຕັ້ງມະຫາຊົນ, ບ້ານ ແລະ ອົງການຈັດຕັ້ງສັງຄົມທຸກພາກສ່ວນ ເປັນເຈົ້າການໂຄສະນາເຜີຍແຜ່, ສຶກສາອົບຮົມ ພະນັກງານລັດຖະກອນ, ຜູ້ປະກອບການ, ປະຊາຊົນບັນດາເຜົ່າ ທົ່ວສັງຄົມ ໄດ້ຮັບຮູ້ ເຂົ້າໃຈ ຕໍ່ມາດຕະການປ້ອງກັນ, ຄວບຄຸມ ການຕິດເຊື້ອ ແຜ່ເຊື້ອ ແລະ ມີການປະກອບສ່ວນ ຮ່ວມມື ຢ່າງເປັນຂະບວນ.

9. ທຸກອົງການຈັດຕັ້ງ, ພະແນກການ, ຂະແໜງການກ່ຽວຂ້ອງທຸກພາກສ່ວນ ທີ່ໄດ້ຮັບມອບໝາຍ ຈົ່ງໄດ້ເພີ່ມທະວີເອົາໃຈໃສ່ໃນການຕິດຕາມ, ກວດກາ, ລາຍງານໃຫ້ຄະນະສະເພາະກິດ ແລະ ກອງເລຂາຄະນະສະເພາະກິດຂັ້ນແຂວງ-ເມືອງ ຮັບຊາບ ພ້ອມກັນແກ້ໄຂຢ່າງທັນເວລາ

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ຮອງເຈົ້າແຂວງ ແຂວງບໍ່ແກ້ວ**

ຫົວໜ້າຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ

ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19

ແຂວງ ບໍ່ແກ້ວ

ເຈົ້າແຂວງ

ດຣ ຄຳຜະຫງາ ພົມພັນຍາ

Dr Khamphagna PHOMPHANYA



Scanned with CamScanner